ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໑໗ ປພຖຂ/ ໐໔໑໒໐໗**

# ບົດຄວາມ

## ພັກຣັດ ຕ້ອງຢຸດຕິຂາຍຊາດ

ການຂາຍຊາດ ຂາຍປະຊາຊົນ ຂອງພັກຣັດ ນັບວັນນັບຮ້າຍແຮງ, ກ້າວໄປສູ່ຄວາມຫລົ້ມຈົມ ຈິບຫາຍ ດັບວາຍທັງປະເທດ ເພາະມີລັສນະ ວາງຢາເບື່ອ ເພື່ອດັບສູນຄົນໃນຊາດ ຂອງຕົນເອງ ໃຫ້ຕາຍໄປ ແລະເສື່ອມຄຸນພາບ ບໍ່ສາມາດຈະແຂ່ງຂັນກັບຊາດຕ່າງດ້າວ ທີ່ເຂົ້າມາຫາກິນຢູ່ປະເທດ ຂອງຕົນ. ສິ່ງເຫລົ່ານີ້, ໜ້າເປັນຫ່ວງ ແລະວິຕົກເຫລືອທີ່ສຸດ!.

ການເຂົ້າມາຄອງອຳນາດ ຂອງພັກຣັດ ໄດ້ສ້າງຄວາມຜິດຫວັງ ໃຫ້ພົ້ນຖານປະຊາຊົນລາວແລະ ອ້າຍເອື້ອຍນ້ອງໃນຖັ້ນແຖວຢ່າງຫລວງຫລາຍ ເພາະ ໃນເວລາການຕໍ່ສູ້ 30 ປີນັ້ນ, ປະຊາຊົນລາວ ໄດ້ອຸທິດຕົນເຂົ້າໃນການປະຕິວັດ ຢ່າງຈິງຈັງແລະຈິງໃຈ. ໄດ້ສົ່ງລູກຮັກຫລາຍເພງຂອງຕົນ ເຂົ້າ ຮ່ວມໃນການປະຕິວັດ, ໄດ້ໄປລຳລຽງຊົນສົ່ງ, ໄດ້ສົ່ງເຂົ້າຊ່ວຍຊາດ ໃຫ້ກອງກຳລັງ ມາໂດຍຕລອດ ແລະໄດ້ຊຸກເຊື່ອງ ພນັກງານປະຕິວັດ ໃຫ້ພົ້ນອັນຕຣາຍ.

ຜູ້ນຳການປະຕິວັດ ເຄີຍໃຫ້ຄຳໝັ້ນສັນຍາວ່າ ເມື່ອການປະຕິວັດໄດ້ພົບກັບຄວາມສຳເຣັດແລ້ວ ພໍ່ແມ່ປະຊາຊົນ ແລະອ້າຍເອື້ອຍນ້ອງໃນຖັ້ນແຖວ ກໍຈະມີຊີວິດການເປັນຢູ່ທີ່ດີຂຶ້ນ. ພັກຣັດຕ້ອງ ໄດ້ສົ່ງເສີມລູກຫລານ ຂອງປະຊາຊົນ ແລະອ້າຍເອື້ອຍນ້ອງໃນຖັ້ນແຖວ ໃຫ້ພວກເຂົາ ໄດ້ຮັບການ ສຶກສາຮໍ່າຮຽນທີ່ດີ ແລະໄດ້ຮັບການປິ່ນປົວ ເມື່ອເວລາເຈັບເປັນ. ຫລັງຈາກພວກເຂົາຮຽນສຳເຣັດ ແລ້ວ, ພັກຣັດ ກໍຈະຊອກວຽກເຮັດງານທຳໃຫ້ພວກເຂົາຢ່າງດີທີ່ສຸດ!. ພັກຣັດ ໄດ້ປະຕິຍານ ວ່າ **"ຍາມໃດ...ກໍຕ້ອງໃຫ້ປະຊາຊົນຮັ່ງມີ ເປັນດີກ່ອນ. ພນັກງານພັກຣັດ ຈິ່ງຮັ່ງມີເປັນດີຕາມຫລັງ"**. ແຕ່ເມື່ອໄດ້ຂຶ້ນກຳອຳນາດແລ້ວ, ປະຊາຊົນລາວ ແລະອ້າຍເອື້ອຍນ້ອງໃນຖັ້ນແຖວ ຊ້ຳພັດ ຖືກ ກົດໜ່ວງ ຮ້ອຍແປດ ພັນປະການ.

ນັກປະຕິວັດ 30 ປີ ສ່ວນຫລວງຫລາຍ...ຖືກປົດປ່ອຍ ໃຫ້ເປັນປະຊາຊົນ, ໃຫ້ກັບຄືນ ສູ່

ທ້ອງຖິ່ນດິນນາ ຂອງໃຜລາວ ດ້ວຍເຫດຜົນຕ່າງໆນາໆ ເປັນຕົ້ນ: ຕ້ອງໄປຮຽນອົບລົມ ຈົບຊັ້ນ ປະຖົມ, ມັທຍົມ ຫລື ອຸດົມ ຈຶ່ງໃຫ້ຢູ່ໃນພນັກງານ ຂອງພັກຣັດໄດ້. ພວກເຂົາ ໄດ້ສູນເສັຽ ທຸກຢ່າງ ເມື່ອກັບຄືນທ້ອງຖິ່ນດິນນາຂອງຕົນ ເພາະບ້ານເຮືອນ, ຄອບຄົວ, ລູກເມັຍ ກໍພັດພາກ ຈາກກັນ ໄປຄົນລະທົນລະເທ່ງ, ພວກເຂົາ ບໍ່ມີຫຍັງເຫລືອຄ້າງອີກແລ້ວ!. ພວກເຂົາ ໄດ້ ພຍາຍາມ ເລີ້ມຕົ້ນຊີວິດໃໝ່...ແຕ່ກໍບໍ່ສາມາດຕັ້ງຕົວໄດ້, ຍ້ອນຣະບົບການ ບໍຣິຫານປະເທດຊາດ ລ້າຫລັງ ຊ້າທາດນັ້ນເອງ.

ກ່ອນການໃຊ້ກົດໝາຍຣັຖທັມມນູນ, ພັກຣັດ ເລັ່ງສ້າງ ສັງຄົມນິຍົມ ໂດຍບໍ່ຜ່ານທຶນນິຍົມ, ພາກັນເຂົ້າຮ່ວມສະຫະກອນກະເສດ, ເຮັດນາລວມໝູ່ສັງຄົມນິຍົມ, ຫາເວລາສ້າງສາທຳມາຫາກິນ ເປັນຂອງຕົນເອງ ເພື່ອລ້ຽງຄອບຄົວ ກໍບໍ່ມີເລີຍ. ຄວາມທຸກຍາກລຳບາກ ບໍ່ໄດ້ແຕກຕ່າງ ກັບ ສມັຍການຕໍ່ສູ້ ມີເສິກສົງຄາມແຕ່ຢ່າງໃດເລີຍ.

ເມື່ອພັກຣັດ ຫັນມາປະຕິບັດນະໂຍບາຍ **ການເມືອງຄອມມິວນິສ ເສຖກິດເສຣີ** ດ້ວຍການ ຮຽກຮ້ອງເອົານັກລົງທຶນຕ່າງຊາດ ເຂົ້າມາລາວ. ຕອນຕົ້ນ, ກໍແມ່ນຊາດ ວຽດນາມ ໄດ້ລັ່ງໄຫລ ເຂົ້າມາ ນັບບໍ່ຖ້ວນ, ຈາກພັນ ເປັນໝື່ນ, ຈາກໝື່ນ ເປັນແສນ, ເຂົ້າມາຍາດແຍ່ງການທຳມາ ຫາກິນ ຂອງຄົນລາວໃນທົ່ວປະເທດ. ພັກຣັດ, ນອກຈາກໃຫ້ສິດທິເສຣີພາບ ແກ່ພວກເຂົາ ໃນ ການສ້າງສາທຳມາຫາກິນແລ້ວ, ຍັງໄດ້ໂອນສັນຊາດໃຫ້ພວກເຂົາ ໄດ້ເປັນປະຊາຊົນລາວຕື່ມອີກ ຫລາຍກວ່າ 400,000 ຄົນແລ້ວ.

ຊີວິດການເປັນຢູ່ຂອງພວກເຂົາ ໄດ້ຮັບຄວາມສະດວກສະບາຍທຸກຢ່າງ. ພວກເຂົາ ສາມາດ ທຳໄດ້ທຸກຢ່າງ; ບໍ່ພຽງແຕ່ ທຳທຸຣະກິດ ຂນາດກາງ ຫລືຂນາດໃຫຍ່ເທົ່ານັ້ນ, ແມ່ນກະທັ່ງການຊື້ ຂາຍເລັກໆນ້ອຍໆຕາມບຸນວັດຕ່າງໆ...ພໍ່ຄ້າແມ່ຄ້າ ວຽດນາມ ກໍໄປຍາດແຍ່ງເອົາສະຖານທີ່ ປຸກຕູບ ປຸກຜາມ ຈອງໄວ້ກ່ອນໝົດ!. ສ່ວນແມ່ຄ້າພໍ່ຄ້າຄົນລາວ ກໍຫາບ່ອນຊື້ບ່ອນຂາຍບໍ່ມີ. ເມື່ອ ທັກ ທວງວ່າ **ບໍ່ມີຄວາມຍຸຕິທັມ**...ເຈົ້າໜ້າທີ່ຂອງພັກຣັດ **ກໍເມີນເສີຍ**.

ພວກເຂົາ ມີຊີວິດສນຸກສນານ, ບໍ່ມີຄວາມຫ່ວງໃຍກັງວົນ ໃນການເຂົ້າໂຮງຮຽນ ແລະປິ່ນປົວ ລູກຫລານ ຂອງພວກເຂົາເຈົ້າ ເພາະໄດ້ຮັບຄວາມເອົາໃຈໃສ່ຈາກພັກຣັດ. ຫລັງຈາກຮຽນຈົບແລ້ວ, ກໍມີໂອກາດ ໄດ້ເຂົ້າເປັນພນັກງານ ຂອງພັກຣັດຢ່າງງ່າຍດາຍຕື່ມອີກ.

ສ່ວນລູກຫລານ ຂອງປະຊາຊົນລາວ ຜູ້ເປັນເຈົ້າຂອງປະເທດແລະເປັນກະດູກສັນຫລັງ ຂອງ ຊາດ ທີ່ມີກຳເນີດ ມາຈາກນັກຣົບວິຣະຊົນຜູ້ເສັຽອົງຄະໃນຍາມສົງຄາມ, ນັກຣົບວິຣະຊົນ ຜູ້ອອກໄປ ເບັ້ຽບຳນານ ແລະອ້າຍເອື້ອຍນ້ອງໃນຖັນແຖວປະຕິວັດ 30 ປີນັ້ນ ແມ່ນບໍ່ມີໂອກາດ ໄດ້ເຂົ້າໂຮງ ຮຽນ ຫລືໄດ້ຮຽນຕໍ່ ແລະໄດ້ຮັບການປິ່ນປົວ ໃນຍາມເຈັບເປັນ. ພວກເຂົາ, ສ່ວນຫລວງຫລາຍ ໄດ້ກາຍເປັນຄົນ ກຶກໜັງສື, ບໍ່ມີອາຊີບ, ບໍ່ມີງານທຳ ຫລືບໍ່...ກໍຖືກພັກຣັດ ຂູດຣີດສໍ້ໂກງແຮງງານ.

ຊີວິດຂອງພວກເຂົາ ຕົກຢູ່ໃນຄວາມມືດມົນເຫລືອທີ່ສຸດ...ບາງຄົນ, ກໍຕົກເປັນທາດຢາເສບຕິດ. ບາງຄົນ, ກໍຕົກເປັນເຍື່ອ ຂອງການຄ້າມະນຸດ, ກາຍເປັນນັກເລງອັນຕະພານ, ຕົກຄຶກຄະດີຕ່າງໆ ນາໆ. ເດັກນ້ອຍລາວ ທີ່ຢູ່ຕາມຊົນນະບົດ ບໍ່ມີໂອກາດໄດ້ເຂົ້າໂຮງຮຽນ, ຊ່ວຍເຫລືອວຽກງານພໍ່ ແມ່ຢູ່ຕາມບ້ານເຮືອນ; ເມື່ອໃຫຍ່ຂຶ້ນມາ ເປັນບ່າວເປັນສາວ...ກໍຖືກແຮງງານຕ່າງຊາດຊຶ່ງມີຢູ່ໃນ

ປະຈຸບັນນີ້ 23,000 ຄົນ ຖືກຕ້ອງຕາມກົດໝາຍ ແລະມີ 3-4 ພັນຄົນ ບໍ່ຖືກກົດໝາຍ...ແຈກຢາຍຢູ່ຕາມແຫ່ງກໍ່ສ້າງຕ່າງໆ...ໄດ້ນຳເອົາເຊື້ອໂຣກ HIV. ເອດສ, ພຍາດອຸບາດອັນນີ້ ໄປແຜ່ພາຍໃຫ້ພວກເຂົາຜູ້ບໍຣິສຸດ ຢ່າງໜ້າສົງສານເຫລືອທີ່ສຸດ. ອັນນີ້, ແມ່ນເປັນການ ທຳລາຍອະນາຄົດຂອງຊາດ ຢ່າງເຈຕນາ ແລະ ຈົງໃຈທຳເຫລືອສຸດ.

ປະຊາຊົນລາວ ຜູ້ເປັນເຈົ້າຂອງປະເທດຊາດ ນັບວັນນັບຈະໝົດໄປ, ຍ້ອນພັກຣັດສົ່ງເສີມ ໃຫ້ຕ່າງຊາດ ເຂົ້າມາກືນກິນ ແລະເບື່ອເມົາ ດ້ວຍນ້ຳກົດໄຊອານາຍ (Cyanide) ຖອກຊະເຈື່ອນຢູ່ບໍຣິເວນ ບໍ່ຄຳເຊໂປນ, ບໍ່ຄຳພູເບັ້ງ, ບວກນ້ຳວັງປາ ເພື່ອເບື່ອເມົາ ຊີວະຊາດຕ່າງໆ ແລະ ປະຊາຊົນໃຫ້ໄດ້ຮັບຄວາມເຈັບເປັນ ແລະລົ້ມຕາຍໄປໃນທີ່ສຸດ.

ພັກຣັດ ຕ້ອງຢຸດຕິ ສ້າງໂທດກັມ ໃຫ້ແກ່ຊາດ, ໃຫ້ແກ່ປະຊາຊົນອີກຕໍ່ໄປ... ແລະ ພັກຣັດຕ້ອງມີຄວາມກ້າຫານ, ຍອມເສັຽສລະຜົນປໂຍດສ່ວນຕົວເພື່ອປະເທດຊາດ ດ້ວຍການປ່ຽນຣັຖບານໂດຍໄວ... ກ່ອນທີ່ປະຊາຊົນຈະອອກມາປະທ້ວງ ຂັບໄລ່ ໃຫ້ພົ້ນຈາກອຳນາດໄປ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໕ ເມສາ ໒໐໐໗.**